# ຈົດໝາຍຢືນຢັນຕົວຢ່າງ

## ທີ່ພິມໃສ່ຫົວຈົດໝາຍຂອງຜູ້ໃຫ້ບໍລິການດ້ານການເບິ່ງແຍງດູແລ ສຸຂະພາບ

**(ພາກທີ I)**

ວັນທີ:

ຮຽນ ຜູ້ໃຫ້ບໍລິການທີ່ຢູ່ອາໄສ ທີ່ຮັກແພງ:

ຂ້າພະເຈົ້າໄດ້ເປັນ ______[ທີ່ປຶກສາ, ພະຍາບານ, ທ່ານໝໍ, ແພດກາຍຍະບຳບັດ, ຈິດຕະແພດ] ຂອງ Name ນັບຕັ້ງແຕ່ ______.

ຂ້າພະເຈົ້າຮູ້ວ່າ ກົດໝາຍວ່າດ້ວຍທີ່ຢູ່ອາໄສທີ່ເປັນທຳ ແລະ ມາດຕາ 504 ຂອງ ກົດໝາຍວ່າດ້ວຍການຟື້ນຟູ ໄດ້ກຳນົດຄວາມໝາຍຂອງ ຄວາມພິການ ຄືດັ່ງນີ້:

1. ມີຄວາມບົກຜ່ອງທາງດ້ານຮ່າງກາຍ ຫຼື ຈິດໃຈ ທີ່ຈຳກັດການເຄື່ອນໄຫວກິດຈະກຳຫຼັກໃນຊີວິດຂອງບຸກຄົນ ຢ່າງໃຫຍ່ຫຼວງ ຈຳນວນໜຶ່ງຢ່າງຂຶ້ນໄປ ແລະ/ຫຼື
2. ມີປະຫວັດໃນການມີຄວາມບົກຜ່ອງທາງດ້ານຮ່າງກາຍ ຫຼື ຈິດໃຈ ທີ່ຈຳກັດການເຄື່ອນໄຫວກິດຈະກຳຫຼັກໃນຊີວິດ ຂອງບຸກຄົນຢ່າງໃຫຍ່ຫຼວງ ຈຳນວນໜຶ່ງຢ່າງຂຶ້ນໄປ ແລະ/ຫຼື
3. ຖືກພິຈາລະນາວ່າ ມີປະຫວັດໃນການມີຄວາມບົກຜ່ອງທາງດ້ານຮ່າງກາຍ ຫຼື ຈິດໃຈ ທີ່ຈຳກັດການເຄື່ອນໄຫວກິດຈະກຳຫຼັກໃນຊີວິດ ຂອງບຸກຄົນຢ່າງໃຫຍ່ຫຼວງ ຈຳນວນໜຶ່ງຢ່າງຂຶ້ນໄປ.

ການເຄື່ອນໄຫວກິດຈະກຳຫຼັກໃນຊີວິດ ລວມທັງ, ແຕ່ບໍ່ຈຳກັດພຽງແຕ່: ການເບິ່ງແຍງດູແລຕົນເອງ, ການເຮັດວຽກຕ່າງໆດ້ວຍຕົນເອງ, ການຍ່າງ, ການເບິ່ງເຫັນ, ການໄດ້ຍິນ, ການປາກເວົ້າ, ການຫາຍໃຈ, ການຮຽນຮູ້ ແລະ/ຫຼື ການເຮັດວຽກ.

ຂ້າພະເຈົ້າຂໍຢືນຢັນວ່າ Name ມີຄວາມພິການ ທີ່ເປັນໄປຕາມຄຳນິຍາມທາງດ້ານກົດໝາຍນີ້.

**(ພາກທີ II)**

Name ມີຄວາມພິການທີ່ຕ້ອງການ * ສັດທີ່ໃຫ້ການຊ່ວຍເຫຼືອ (ແມວ, ຊື່ວ່າ: ໂທບີ້ (Toby)) .

ຈຳເປັນຈະຕ້ອງໄດ້ໃຫ້ສິ່ງອຳນວຍຄວາມສະດວກໃຫ້ແກ່ Name ສຳລັບ * ສັດທີ່ໃຫ້ການຊ່ວຍເຫຼືອ ໃນທີ່ຢູ່ອາໄສຂອງຜູ້ກ່ຽວໃຫ້ໄວເທົ່າທີ່ຈະໄວໄດ້ ເພື່ອໃຫ້ຄວາມພິການຂອງ ____Name____ ຈະໄດ້ຮັບການປັບປຸງໃຫ້ດີຂຶ້ນ, ບໍ່ໃຫ້ຮຸນແຮງຂຶ້ນ ແລະ/ຫຼື ຮ້າຍແຮງຂຶ້ນເລື້ອຍໆ.

ດ້ວຍຄວາມນັບຖື,
[ທ່ານໝໍ, ພະຍາບານ, ຜູ້ຊ່ວຍແພດ, ແພດກາຍຍະບຳບັດ/ທີ່ປຶກສາ, ພະນັກງານສັງຄົມສົງເຄາະ, ຈິດຕະແພດ, ຜູ້ຊ່ຽວຊານດ້ານການໃຊ້ຊີວິດແບບເປັນເອກະລາດ ແລະ ອື່ນໆ.]

ຂໍ້ມູນຕິດຕໍ່ຂອງຜູ້ໃຫ້ບໍລິການດ້ານການເບິ່ງແຍງດູແລສຸຂະພາບ

***ຕົວຢ່າງ RA:** ພື້ນທີ່ຈອດລົດທີ່ສະຫງວນໄວ້, ການຕໍ່ອາຍຸການເຊົ່າ, ການສິ້ນສຸດສັນຍາເຊົ່າໂດຍບໍ່ມີການປັບໃໝ, ການໂອນຫ້ອງ, ການສົ່ງຄ່າເຊົ່າຜ່ານທາງໄປສະນີ ແລະ ອື່ນໆ.

***ຕົວຢ່າງ RM:** ການຕິດຕັ້ງຮາວຈັບ ຫຼື ທາງລາດ, ການປ່ຽນລູກບິດປະຕູຊົງກົມດ້ວຍລູກບິດຄັນໂຍກແບບລຽບ, ຫຼຸດລະດັບເຄົາເຕີ, ຂະຫຍາຍທາງປະຕູໃຫ້ກວ້າງຂຶ້ນ, ວາງມ້ອນໄວ້ໃນບ່ອນອາບນ້ຳ ແລະ ອື່ນໆ. ໃຜຈະເປັນຜູ້ຈ່າຍ? ການປັບແຕ່ງມັກຈະມີຄ່າໃຊ້ຈ່າຍທີ່ເປັນຄວາມຮັບຜິດຊອບຂອງຄົນພິການ ເວັ້ນເສຍແຕ່ວ່າຜູ້ກ່ຽວຈະອາໄສຢູ່ໃນອາຄານທີ່ໄດ້ຮັບເງິນອຸດໜູນຂອງລັດຖະບານກາງເທົ່ານັ້ນ. ຂໍແນະນຳເປັນຢ່າງຍິ່ງໃຫ້ກະກຽມເອກະສານການຮ້ອງຂໍການດັດແກ້ ແລະ ຄວາມຄາດຫວັງໃນຕອນທ້າຍຂອງການເຊົ່າກ່ຽວກັບການຟື້ນຟູ.

# ບຸກຄົນທີ່ຖືກກຳນົດວ່າເປັນ "ບຸກຄົນພິການ" ແມ່ນບຸກຄົນແນວໃດ?

ພາຍໃຕ້ກົດໝາຍວ່າດ້ວຍທີ່ຢູ່ອາໄສທີ່ເປັນທຳ, ຄວາມພິການ ໄດ້ຖືກກຳນົດໄວ້ວ່າ ໝາຍເຖິງ:

- ມີຄວາມບົກຜ່ອງທາງດ້ານຮ່າງກາຍ ຫຼື ຈິດໃຈ ທີ່ຈຳກັດການເຄື່ອນໄຫວກິດຈະກຳຫຼັກໃນຊີວິດ ຢ່າງໃຫຍ່ຫຼວງ ຈຳນວນໜຶ່ງຢ່າງຂຶ້ນໄປ
- ມີປະຫວັດວ່າມີຄວາມບົກຜ່ອງດັ່ງກ່າວ ຫຼື
- ຖືກພິຈະລະນາວ່າມີຄວາມບົກພ່ອງ ດັ່ງກ່າວ.

ພາຍໃຕ້ RCW 49.60, ກົດໝາຍຂອງລັດວໍຊິງຕັນ ວ່າດ້ວຍການຕ້ານການຈຳແນກ (WLAD), ຄວາມພິການ ຖືກກຳນົດໃຫ້ລວມເອົາເງື່ອນໄຂຕ່າງໆ ທີ່ເປັນຊົ່ວຄາວ ຫຼື ຖາວອນ, ທຳມະດາທົ່ວໄປ ຫຼື ບໍ່ທຳມະດາທົ່ວໄປ, ບັນທຶກໄວ້ ຫຼື ບໍ່ໄດ້ບັນທຶກໄວ້.

EQUAL HOUSING OPPORTUNITY

---

ຖ້າທ່ານຄິດວ່າ ທ່ານຖືກຈຳແນກໃນການເຮັດທຸລະກຳດ້ານທີ່ພັກອາໄສ, ໃຫ້ຕິດຕໍ່:

Northwest Fair Housing Alliance
25 W Main Ave., Suite 250
Spokane, WA 99201
509-325-2665
1-800-200– FAIR (3247)
ແຟັກ: 1-866-6308

NWFHA ສາມາດໃຫ້ຄຳແນະນຳກ່ຽວກັບທາງເລືອກຂອງທ່ານແກ່ທ່ານ ແລະ ສະໜັບສະໜູນທ່ານ. ການບໍລິການຂອງພວກເຮົາແມ່ນບໍ່ເສຍຄ່າ. ຫ້ອງການຂອງພວກເຮົາແມ່ນສາມາດເຂົ້າເຖິງໄດ້.

---

U.S. DEPARTMENT OF HOUSING AND URBAN DEVELOPMENT

ວຽກງານທີ່ເປັນພື້ນຖານສຳລັບການພິມເຜີຍແຜ່ນີ້ ໄດ້ຮັບການສະໜັບສະໜູນບາງສ່ວນໂດຍ ການສະໜອງເງິນທຶນພາຍໃຕ້ການຊ່ວຍເຫຼືອລ້າ ກັບກະຊວງເຄຫະ ແລະ ການພັດທະນາຕົວເມືອງ (Department of Housing and Urban Development, HUD) ແຫ່ງສະຫະລັດ. NWFHA ຮັບຜິດຊອບຕໍ່ຄວາມຖືກຕ້ອງຂອງ ຖະແຫຼງການ ແລະ ການແປພາສາທີ່ມີຢູ່ໃນສິ່ງພິມນີ້ ແຕ່ພຽງຜູ້ດຽວ.
ພາສາອັງກິດ– 8/2021– LAOTIAN

ກົດໝາຍວ່າດ້ວຍທີ່ຢູ່ອາໄສທີ່ເປັນທຳຂອງລັດຖະບານກາງ

# ສັດທີ່ໃຫ້ການຊ່ວຍເຫຼືອຢູ່ໃນທີ່ຢູ່ອາໄສ

## ຄຳແນະນຳ ສຳລັບຄົນ ພິການ



NORTHWEST FAIR HOUSING ALLIANCE

(509) 325-2665
1-800-200-FAIR (3247)
www.nwfairhouse.org

## ການອຳນວຍຄວາມສະດວກທີ່ສົມເຫດສົມຜົນ (RA) :

ການປ່ຽນແປງ, ການຍົກເວັ້ນ ຫຼື ການປັບປ່ຽນກົດລະບຽບ, ນະໂຍບາຍ, ແນວທາງປະຕິບັດ ຫຼື ການບໍລິການ ທີ່ຊ່ວຍໃຫ້ຄົນພິການສາມາດນຳໃຊ້ ແລະ ມີຄວາມສຸກກັບທີ່ຢູ່ອາໄສ, ລວມທັງພື້ນທີ່ທົ່ວໄປ. ການມີສັດ ທີ່ໃຫ້ການຊ່ວຍເຫຼືອຢູ່ໃນທີ່ຢູ່ອາໄສທີ່ "ຫ້າມບໍ່ໃຫ້ລ້ຽງສັດ" ເປັນຕົວຢ່າງໜຶ່ງຂອງ RA.

## ສັດທີ່ໃຫ້ການຊ່ວຍເຫຼືອ

ບັນດາເຈົ້າຂອງ ຈະເອີ້ນສັດດ້ວຍ "ຊື່" ທີ່ແຕກຕ່າງກັນ ຕົວຢ່າງ: ການບຳບັດ, ການຊ່ວຍເຫຼືອທາງດ້ານອາລົມ, ໃບສັ່ງແພດ, ການແຈ້ງເຕືອນທາງການແພດ, ເພື່ອນຮ່ວມທາງ, ການເຄື່ອນທີ່, ຈິດຕະສາດ, ສັດບໍລິການ, ໝານຳທາງ ແລະ ອື່ນໆ, ແຕ່ຊື່ບໍ່ສຳຄັນ. ເພື່ອໃຫ້ໄດ້ຮັບການອະນຸຍາດໃຫ້ເປັນການອຳນວຍຄວາມສະດວກທີ່ສົມເຫດສົມຜົນ, **ຈະຕ້ອງມີສັດ ສຳລັບຄົນພິການ.**

ບຸກຄົນທີ່ມີຄວາມພິການທີ່ເບິ່ງເຫັນ ຫຼື ເບິ່ງບໍ່ເຫັນ (ທາງຮ່າງກາຍ ຫຼື ຈິດໃຈ) ຫຼາກຫຼາຍຊະນິດ ຈະໃຊ້ສັດທີ່ໃຫ້ການຊ່ວຍເຫຼືອ ເພື່ອ: ໄປເອົາຢາ, ສົ່ງສັນຍານບອກອາການຊັກ, ແຈ້ງເຕືອນຄວາມຕ້ອງການອິນຊູລິນ, ສະຫງົບຄວາມກັງວົນ, ບັນເທົາອາການຊຶມເສົ້າ. ຄວາມວິຕົກກັງວົນ ຫຼື PTSD, ຕອບສະໜອງ ແລະ ເຕືອນຄົນຫູໜວກ ຫຼື ຫູຕຶງ, ໃຫ້ຄຳແນະນຳ ແລະ ການນຳທາງແກ່ຄົນຕາບອດ ແລະ ອື່ນໆ.



## ແນວພັນ, ຂະໜາດ, ນ້ຳໜັກ, ສາຍພັນ

ກົດລະບຽບວ່າດ້ວຍສັດລ້ຽງຂອງຜູ້ໃຫ້ບໍລິການທີ່ຢູ່ອາໄສ ກ່ຽວກັບສາຍພັນ, ຂະໜາດ, ນ້ຳໜັກ ແລະ ແນວພັນ ຈະບໍ່ມີຜົນບັງຄັບໃຊ້ກັບສັດທີ່ໃຫ້ການຊ່ວຍເຫຼືອ. ແນວໃດກໍ່ຕາມ, ຈຳນວນ ແລະ ສາຍພັນຂອງ ສັດທີ່ໄດ້ຮັບການອະນຸຍາດອາດຈະຖືກຈຳກັດໂດຍກົດໝາຍຂອງເທດສະບານຂອງທ່ານ (ເຊັ່ນ: ການຈຳກັດຈຳນວນສັດພາຍໃນບ້ານ, ຂໍ້ຫ້າມສຳລັບໝາປ່າ ແລະ ງູທີ່ມີພິດ ແລະ ອື່ນໆ).

## ຄວາມຮັບຜິດຊອບຂອງເຈົ້າຂອງ:

- ເກັບ ແລະ ຖິ້ມສິ່ງເສດເຫຼືອຈາກສັດຢ່າງຖືກຕ້ອງ
- ຄວບຄຸມສັດຢູ່ຕະຫຼອດເວລາ, ໂດຍປົກກະຕິແລ້ວ ຊຶ່ງໝາຍຄວາມວ່າ ຕ້ອງມີສາຍຜູກຄໍສັດ
- ພຶດຕິກຳຂອງສັດ: ບໍ່ພຸ່ງເຂົ້າໃສ່, ບໍ່ກະໂດດ, ກັດ, ຫຍິກ ຫຼື ເຫົ່າຫຼາຍເກີນໄປ
- ໃບອະນຸຍາດ, ການສັກຢາ, ການຈົດທະບຽນ ຕາມ ທີ່ກຳນົດໄວ້ໂດຍຕົວເມືອງ/ເທດສະບານທີ່ທ່ານອາໄສຢູ່



## ການແກ້ໄຂບັນຫາ: ການບັນເທົາ

- ອາຈົມ / ສິ່ງເສດເຫຼືອ — ຜູ້ເບິ່ງແຍງດູແລ/ໝູ່ເພື່ອນ/ຄອບຄົວ ສາມາດຊ່ວຍ ເກັບສິ່ງເສດເຫຼືອ ແລະ ເອົາໄປຖິ້ມຢ່າງເໝາະສົມໃຫ້ແກ່ບຸກຄົນພິການໄດ້
- ການງັບ ຫຼື ການກັດ — ໃຊ້ບອກປິດປາກໃນເວລາເຂົ້າ ແລະ ອອກຈາກອາຄານ ຫຼື ເຂົ້າໄປໃນພື້ນທີ່ທົ່ວໄປ ເຊັ່ນ: ລິບ ຫຼື ຫ້ອງຊັກລີດ
- ການເຫົ່າຫຼາຍເກີນໄປ — ຝຶກໃຫ້ມີການເຊື່ອຟັງ ແລະ ການຈັດການ ຄຸ້ມຄອງ
- ການແລ່ນທົ່ວທີບ—ການຝຶກເພີ່ມຕື່ມ ສຳລັບການຄວບຄຸມ ສຽງ ແລະ/ຫຼື ການໃຊ້ເຊືອກຜູກຕະຫຼອດເວລາ



## ການຮ້ອງຂໍສັດທີ່ໃຫ້ການຊ່ວຍເຫຼືອ

- ບຸກຄົນທີ່ມີຄວາມພິການ ຫຼື ຜູ້ຕາງໜ້າ *(ໝູ່ເພື່ອນ, ຄອບຄົວ, ອົງການຈັດຕັ້ງສະໜັບສະໜູນ)* ສາມາດຮ້ອງຂໍໄດ້. ບໍ່ມີແບບຟອມ ຫຼື ແມ່ແບບສະເພາະທີ່ຕ້ອງໃຊ້ສຳລັບການຮ້ອງຂໍ.
- ການຮ້ອງຂໍ ແມ່ນສາມາດເຮັດທາງປາກເປົ່າໄດ້. ເພື່ອຄວາມຊັດເຈນ, ***ພວກເຮົາຂໍແນະນຳຢ່າງຍິ່ງໃຫ້ເຮັດຄຳຮ້ອງຂໍເປັນລາຍລັກອັກສອນ.*** ຮັກສາສຳເນົາສະບັບໜຶ່ງໄວ້.
- ຄຳຮ້ອງຂໍບໍ່ຈຳເປັນຕ້ອງເປີດເຜີຍລັກສະນະ ຫຼື ຄວາມຮຸນແຮງຂອງຄວາມພິການຂອງບຸກຄົນດັ່ງກ່າວ ແລະ ຜູ້ໃຫ້ບໍລິການທີ່ຢູ່ອາໄສ ກໍບໍ່ສາມາດຖາມກ່ຽວກັບສິ່ງເຫຼົ່ານີ້ໄດ້.
- ສິ່ງຈຳເປັນກໍຄື ຕ້ອງໄດ້ສະແດງໃຫ້ເຫັນເຖິງຄວາມຕ້ອງການທີ່ກ່ຽວຂ້ອງກັບຄວາມພິການໂດຍກົງ.
- ບຸກຄົນທີ່ຮ້ອງຂໍສັດທີ່ໃຫ້ການຊ່ວຍເຫຼືອ ອາດຈະຖືກຮ້ອງຂໍໃຫ້ສະໜອງ ***ຈົດໝາຍຢືນຢັນ***ຈາກຜູ້ໃຫ້ບໍລິການດ້ານການເບິ່ງແຍງດູແລສຸຂະພາບ ຫຼື ບຸກຄົນທີສາມທີ່ສາມາດເຊື່ອຖືໄດ້ ທີ່ຮູ້ກ່ຽວກັບຄວາມພິການຂອງບຸກຄົນດັ່ງກ່າວ (ມີຕົວຢ່າງຢູ່ດ້ານຫຼັງ).
- ຄວາມພິການທີ່ຊັດເຈນ, ເບິ່ງເຫັນໄດ້ ຫຼື ເປັນທີ່ຮູ້ຈັກ **ບໍ່**ຈຳເປັນຕ້ອງມີການຢືນຢັນຄວາມພິການ—ແຕ່ອາດຈະຕ້ອງການໄດ້ຢືນຢັນຄວາມພິການ**ທີ່ກ່ຽວຂ້ອງ** ຖ້າບໍ່ແມ່ນຄວາມພິການທີ່ຊັດເຈນ ຫຼື ເປັນທີ່ຮູ້ຈັກ.
- ຄຳຮ້ອງຂໍ RA ສາມາດເຮັດໄດ້ທຸກເວລາໃນການເຊົ່າ (ຄຳຮ້ອງຂໍຜ່ານການຍົກເລີກ/ການຂັບໄລ່).
- ບໍ່ມີຂີດຈຳກັດຕໍ່ຈຳນວນ RA ທີ່ບຸກຄົນໜຶ່ງອາດຈະສາມາດຮ້ອງຂໍໄດ້.

## ມີຄ່າທຳນຽມບໍ? ໄດ້ຮັບຜິດຊອບຄວາມເສຍຫາຍບ? ມີໃບຢັ້ງຢືນສັດບໍ?

- **ເງິນມັດຈຳ, ຄ່າທຳນຽມ, ຄ່າເຊົ່າສັດລ້ຽງ -** ສັດທີ່ໃຫ້ການຊ່ວຍເຫຼືອບໍ່ແມ່ນ "ສັດລ້ຽງ" ເພາະສະນັ້ນ ຕ້ອງຍົກເວັ້ນຄ່າທຳນຽມ, ຄ່າເຊົ່າ, ເງິນມັດຈຳສັດລ້ຽງ
- **ຄວາມເສຍຫາຍ:** ເຈົ້າຂອງສັດຕ້ອງຮັບຜິດຊອບຕໍ່ຄວາມເສຍຫາຍທີ່ສັດທີ່ໃຫ້ການຊ່ວຍເຫຼືອກໍ່ຂຶ້ນ ແລະ ອາດຖືກຮຽກເກັບ ຄ່າສ້ອມແປງ ຫຼື ປ່ຽນໃໝ່ໃນລະຫວ່າງ ຫຼື ຫຼັງການເຊົ່າ
- **ໃບຢັ້ງຢືນສັດ:** "ໃບຢັ້ງຢືນ" ສັດ ແມ່ນບໍ່ຈຳເປັນຕ້ອງມີກໍໄດ້. ຊຶ່ງເຈົ້າຂອງສັດຈະຕ້ອງຖືກ ພິຈາລະນາສ່າເປັນ:
  1.) ບຸກຄົນທີ່ມີຄວາມພິການ 2.) ຈະຕ້ອງມີການກຳນົດຄວາມຕ້ອງການ/ຂໍ້ກຳນົດສຳລັບສັດ 3.) ສັດຄວນຈະເປັນສັດທີ່ສົມເຫດສົມຜົນ